ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283




# ພິທີເຊັນບົດບັນທຶກຄວາມເຂົ້າໃຈ ລະຫວ່າງ ສຳນັກງານຂໍ້ມູນຕ້ານການຟອກເງິນ ແລະ ກົມຄຸ້ມຄອງລະບົບຊຳລະສະສາງ, ທະນາຄານ ແຫ່ງ ສປປ ລາວ ໃນວັນທີ 17 ມິຖຸນາ 2021, ທີ່ທະນາຄານແຫ່ງ ສປປ ລາວ, ຫ້ອງປະຊຸມ ສຕຟງ.

ສຳນັກງານຂໍ້ມູນຕ້ານການຟອກເງິນ (ສຕຟງ) ແລະ ກົມຄຸ້ມຄອງລະບົບຊຳລະສະສາງ (ຄລຊ), ທະນາຄານ ແຫ່ງ ສປປ ລາວ ໄດ້ຈັດພິທີເຊັນບົດບັນທຶກຄວາມເຂົ້າໃຈ (Memorandum of Understanding “MOU”) ໃນວັນທີ 17 ມິຖຸນາ 2021 ທີ່ສຳນັກງານຂໍ້ມູນຕ້ານການຟອກເງິນ, ຊຶ່ງລົງນາມໂດຍທ່ານ ນາງ ແພງສີ ແພງເມືອງ, ຫົວໜ້າສຳນັກງານຂໍ້ມູນຕ້ານການຟອກເງິນ ແລະ ທ່ານ ສຸລິສັກ ທຳນຸວົງ, ຫົວໜ້າກົມຄຸ້ມຄອງລະບົບຊຳລະສະສາງ. ໃຫ້ກຽດເຂົ້າຮ່ວມ ແລະ ເປັນສັກຂີພະຍານໂດຍ ທ່ານ ພຸດທະໄຊ ສີວິໄລ, ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ. ນອກຈາກນີ້, ຍັງປະກອບມີຕາງໜ້າບັນດາຄະນະກົມ, ຄະນະພະແນກ ແລະ ພະນັກງານກ່ຽວຂ້ອງ ຈາກທະນາຄານແຫ່ງ ສປປ ລາວ ເຂົ້າຮ່ວມເປັນສັກຂີພະຍານອີກດ້ວຍ.




ການເຊັນບົດບັນທຶກຄວາມເຂົ້າໃຈໃນຄັ້ງນີ້ ເປັນການເພີ່ມທະວີການຮ່ວມມື ເຊິ່ງກັນ ແລະ ກັນ ລະຫວ່າງ ສຕຟງ ແລະ ຄລຊ ໃນການຈັດຕັ້ງປະຕິບັດວຽກງານການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃນຂົງເຂດວຽກງານການເງິນ, ການຄຸ້ມຄອງ ແລະ ຕິດຕາມກວດກາລະບົບການຊຳລະ ຢູ່ ສປປ ລາວ, ການຮັກສາຄວາມລັບ ແລະ ຄວາມຮັບຜິດຊອບ ໃນການຮ່ວມມື ຂອງທັງສອງຝ່າຍ ໃຫ້ເປັນຂັ້ນຕອນ, ຮູບປະທຳ ແລະ ແນໃສ່ການຊຳລະສະສາງໃນລະບົບທະນາຄານໃຫ້ມີຄວາມທັນສະໄໝ ມີຄວາມໂປ່ງໃສ ບໍ່ຕົກເປັນແຫຼ່ງ ຫຼື ເປັນເຄື່ອງມື ໃນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ. ພ້ອມດຽວກັນນີ້, ກໍ່ເປັນການສ້າງກົນໄກການເຮັດວຽກຮ່ວມກັນລະຫວ່າງ 2 ກົມໃຫ້ມີຄວາມຄ່ອງຕົວຫຼາຍຂຶ້ນ ສາມາດກຳນົດໄດ້ບັນດາຊ່ອງວ່າງທີ່ເກີດຂຶ້ນໃນແຕ່ລະໄລຍະ ແລະ ຫາວິທີທາງແກ້ໄຂໃຫ້ທັນສະພາບການ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຂອງທັງສອງຝ່າຍມີປະສິດທິພາບຍິ່ງຂຶ້ນ.

**ຂ່າວໂດຍ: ສຕຟງ**